ດີໃຈໄດ້ປາກຕ້ານ    ຂານຕໍ່ລາວເຊໂດນ
ບັນດົນໃຈນາງນຳ    ແມ່ນສຸຂຊືນຄຳອ້າຍ
ຮວມທັງຈິດຫມາຍນ້ອຍ    ລອຍມາຈາກຜູ້ອ່ານ
ຂໍໂທດເດີ    ເຮັດໃຫ້ທ່ານຫວ່າວຸ້ນ    ວິນເກີ້ແລ້ວຫ່າງລາ

ຫຼາຍບັນຫາຍາກຍຸ້ງ    ຖຸງຄັ່ງໃນຈິດ
ຄິດໄປໃສກໍສຸດແສນ    ແຫນ້ນໃນຊວງນ້ອງ
ມີຫຼາຍແນວຂັດຂ້ອງ    ຫມອງໃຈແລະຂົມຂື່ນ
ທຸກວັນຄືນນ້ອງຮ່ຳໄຫ້    ແຕ່ໄລຮ້າງຫ່າງປາກກາ

ໂອນໍ!    ສັງມາມືດແປດດ້ານ    ທ່ານຜູ້ອ່ານພັດຊຽນຫາ    ຄິດຮອດເດ
ໄດ້ວາຈາດອມຊາຍ    ອ້າຍວິຈາຣໃຈແຈ້ງ
ປາຍປາກກາທີ່ເຄີຍແຫ້ງ    ທັງຫມົດແຮງຊິປະປ່ອຍ
ຕັດໃຈລອຍເລື່ອນຟ້າ    ຊິລາຖິ້ມບໍ່ຕ່າວມາ

ແຕ່ວ່າຄຳກ່າວຕ້ານ    ຂອງທ່ານທັງສອງ
ຜູ້ອ່ານຍັງຫມາຍປອງ    ນັ່ງຄອງຄອຍຖ້າ
ສັງຊິວາງປາກກາໄວ້    ໄລລາບໍ່ກັບຕ່າວ
ຂ່າວວ່ານ້ຳມຶກແຫ້ງ    ອ້າຍຂໍແຕ້ມແຕ່ງເຕີມ  ວ່າຊັ້ນ

ກຳລັງໃຈນາງຈຶ່ງເພີ້ມ    ເຕີມຕື່ມໃຈນາງຮັກ
ຊາວຫຼັກເຈັດທັງຫຼາຍ    ກະຕ່າຍຫມາຍຈັບອ້າຍ
ຕັດສິນໃຈ    ຕົກກະເທີນໄດ້ປ້ຳ    ຊິນຳຮອນຫມົດທຸກງ່າ
ງ່າໃດອອກນອກຮົ້ວ    ຊິນຳມ້ວນໃສ່ສວນ    ທ່ານເອີຍ

ຄິດທົບທວນບໍ່ແລ້ວ          ແນວໃຈຫ່ວງແຕ່ການຊຽນ
ສມອງວົນວຽນໄປ          ອັ່ງໃນມະໂນງມ້ງ
ນ້ອງນີ້   ປຽບເໝືອນເຮືອຄາແກ້ງ          ກວຽນເຫັນເພິ່ນມາແກ່
ບາດວ່າໄປຮອດນ້ຳ          ເຮືອຊິໄດ້ແກ່ກວຽນ

ຫຼາຍທ່ານຊຽນສິ່ງນ້ອງ          ຜູ້ເນື້ອຄ່ອງສາວຫຼັກເຈັດ
ເມັດນ້ຳຕານເມືອງສວັນ          ໄດ້ຫ່າງພົງພັນເຊື້ອ
ເຫຼືອແຕ່ຮອຍປາກກາໄວ້          ທັງຫົວໃຈຝາກຜູ້ອ່ານ
ທຸກຜົລງານທີ່ໄດ້ສ້າງ          ສັງວາງໄວ້ແລ້ວຫ່າງຫນີ   ວ່າຊັ້ນ

ສິພັນດອນຜູ້ນີ້          ມີໃຈຕໍ່ຈະຂໍຮັບ
ກັບມາແທນສາວຫຼັກເຈັດ          ເມັດນ້ຳຕານເມືອງໃຕ້
ຖ້າໄດ້ກຳຄໍແຂ້          ບໍ່ຫວັງວາງໃຫ້ຫາງຟາດ
ວາສນາຂອງມ້າບັກກ່ຳນ້ອຍ   ຫນີແຂ້ຢ້ານຮ່າກິນ   ທ່ານເອີຍ

ດວງດາວັນຍັງບໍ່ຊິ້ນ          ດິນຍັງຄູ່ຄຽງນະພາ
ການຈາກລາຕ້ອງມີ   ກັບ          ຊົ່ວພັບຕາມາຍ້ອນ
ເຫັນວ່າຂອນໄຫຼນ້ຳ          ຢ່າລືກັນວ່າຂອນດອກ
ລາງເທື່ອລົງແຊ່ນ້ຳ          ຫຼາຍມື້ຊິປົ່ງໃບ ທ່ານເອີຍ

ສິພັນດອນ   ຈິດໃຈເພີຍແຜ່ກວ້າງ          ດວງປະເສີດບໍຣິສຸດ
ຊຸດເລີກເລັງແລໄກ          ບໍ່ໄດ້ເຄືອງຄວາມແຄ້ນ
ດວງໃຈນາງຍັງຝັງແທນນັ້ນ          ຄິດນຳແຟນຜູ້ເຄີຍອ່ານ

ທຸກຜົລງານ     ສາວຫຼັກເຈັດເພິ່ນສ້າງໄວ້     ນາງຊິໄດ້ຕໍ່ກອນ   ທ່ານເອີຍ

ໂດຍ:     ສີພັນດອນ ດອກບົວກາງວັນ